ເຊກອງລາຄາເຂົ້າຕ່ຳ ຊາວນາຫັນປູກຜັກ ທົ່ງນາແຊງຫລຸດແຜນ
Wednesday, 13 March 2013 01:14
ລະດູການຜະລິດເຂົ້ານາແຊງໃນ ປີ 2013 ແຂວງເຊກອງບໍ່ບັນລຸເປົ້າທີ່ ຕັ້ງໄວ້
1.105 ເຮັກຕາ, ຍ້ອນຊາວກະ
ສິກອນຫັນໄປປູກຜັກຂາຍແທນລາຍໄດ້ຈາກລາຄາເຂົ້າທີ່ຕົກຕ່ຳ.

ທ່ານ ສີສະຫມຸດ ໄຊມົນຕີ ຮອງຫົວຫນ້າຂະແຫນງປູກຝັງພະແນກກະສິກຳ ແລະ ປ່າໄມ້
ແຂວງເຊກອງລາຍງານວ່າ: ການຜະລິດເຂົ້ານາແຊງປີນີ້ ແຂວງເຊກອງ
ປະຕິບັດໄດ້ພຽງ 380 ເຮັກຕາ ຈາກພື້ນທີ່ມີນ້ຳຫົດ 625 ເຮັກຕາ ຂະນະ
ທີ່ແຜນການຄາດໄວ້ 1.105 ເຮັກຕາ ຍ້ອນເນື້ອທີ່

ເຮັດນາແຊງຢູ່ເມືອງທ່າແຕງ ແລະ ເມືອງລະມາມ ມີຈຳນວນຫລຸດລົງ
ສາເຫດເກີດຈາກບັນຫາລາຄາເຂົ້າຕົກຕ່ຳ,
ອີກທັງຍັງຂາດແຮງງານເຂົ້າໃນການຜະລິດ ດ້ວຍເຫດນີ້ຊາວກະສິກອນ
ສ່ວນຫນຶ່ງຈິ່ງຫັນເນື້ອທີ່ນາ
ມາປູກພືດຜັກເພື່ອເປັນບ່ອນສ້າງລາຍຮັບທົດແທນ ການຂາຍເຂົ້າ.

ທ່ານ ຮອງຫົວຫນ້າຂະແຫນງປູກຝັງ ໃຫ້ຮູ້ອີກວ່າ: ນອກຈາກບັນຫາລາຄາ
ເຂົ້າຕົກຕ່ຳແລ້ວການສະຫນອງນ້ຳບໍ່
ພຽງພໍກໍ່ມີສ່ວນເຮັດໃຫ້ປະຊາຊົນປະລະເນື້ອທີ່ ນາແຊງໃນປີນີ້
ເຊິ່ງສະແດງອອກຄື: ທົ່ວແຂວງມີເນື້ອທີ່ແຜນການຜະລິດເຂົ້ານາແຊງ 1.105 ເຮັກຕາ,
ເນື້ອທີ່ນ້ຳຫົດໄດ້ຕົວຈິງ 625 ເຮັກຕາ ແຕ່ພາກປະຕິບັດຕົວຈິງໄດ້ພຽງ 380
ເຮັກຕາ, ປະຈຸບັນສາມາດປັກດຳໄດ້ແລ້ວ 81%

ໃນນັ້ນ ເມືອງລະມາມ ມີເນື້ອທີ່ທັງຫມົດ 665 ເຮັກຕາ, ເນື້ອທີ່ນ້ຳຫົດໄດ້ 327
ເຮັກຕາ, ແຕ່ເນື້ອທີ່ປະຕິບັດຕົວຈິງ 131 ເຮັກຕາ, ປະຊາຊົນເອົາພື້ນທີ່ 196
 1 / 2

ເຊກອງລາຄາເຂົ້າຕ່ຳ ຊາວນາຫັນປູກຜັກ ທົ່ງນາແຊງຫລຸດແຜນ
Wednesday, 13 March 2013 01:14
ເຮັກຕາ ປູກພືດ, ສ່ວນເມືອງທ່າແຕງມີເນື້ອທີ່ທັງຫມົດ 180 ເຮັກຕາ,
ເນື້ອທີ່ນ້ຳຫົດໄດ້ 52 ເຮັກຕາ ເຮັດນາແຊງພຽງ 23 ເຮັກຕາ ເຫລືອນັ້ນ 29 ເຮັກຕາ
ແມ່ນໃຊ້ປູກພືດ ກະສິກຳເປັນສິນຄ້າ.

ຢ່າງໃດກໍ່ຕາມ ເຖິງວ່າຫລາຍເມືອງຈະປ່ອຍປະການເຮັດນາແຊງ
ແຕ່ເມືອງກະລຶມທີ່ມີເນື້ອທີ່ນາທັງຫມົດ 80 ເຮັກຕາ
ມີນ້ຳສະຫນອງຢ່າງພຽງພໍແມ່ນໄດ້ປັກດຳທັງຫມົດ
ປະຈຸບັນສຳເລັດເປັນທີ່ຮຽບຮ້ອຍແລ້ວ, ເມືອງດາກຈຶງມີເນື້ອທີ່ 180 ເຮັກຕາ
ປະຕິບັດ 145,8 ເຮັກຕາ ຍັງອີກ 20% ເທົ່ານັ້ນຈະປັກດຳໄດ້ສຳເລັດ.

ສຳລັບເນື້ອທີ່ແຜນການຜະລິດພືດລະດູແລ້ງ 170 ເຮັກຕາ, ສະມັດຖະພາບ 5,7
ໂຕນຕໍ່ເຮັກຕາ, ໃນນີ້ ສະເພາະຜະລິດພືດສະບຽງອາຫານ 100 ເຮັກຕາ,
ເນື້ອທີ່ພືດເປັນສິນຄ້າ 70 ເຮັກຕາ,
ແຕ່ປະຈຸບັນການຜະລິດພືດສະບຽງອາຫານຜັດປະຕິບັດໄດ້ຕົວຈິງ 216 ເຮັກຕາ,
ພືດເປັນສິນຄ້າໄດ້ 117 ເຮັກຕາ, ທ່ານ ສີສະຫມຸດ ໄຊມຸນຕີ ກ່າວ.

ແຫຼ່ງທີ່ມາຂອງຂ່າວ:
 2 / 2